ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 02 ມັງກອນ 2020

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ**

**(ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 28/ສພຊ, ລົງວັນທີ 22 ພະຈິກ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 30/ຄປຈ, ລົງວັນທີ 04 ທັນວາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 28 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 / 11 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 22 ພະຈິກ 2019.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 73 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 ພະຈິກ 2019

# ກົດໝາຍວ່າດ້ວຍ
# ການອະນາໄມ ແລະ ສົ່ງເສີມສຸຂະພາບ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີ ປະສິດທິພາບ, ປະສິດທິຜົນ, ຕໍ່ເນື່ອງ ແລະ ຍືນຍົງ ແນໃສ່ຮັບປະກັນໃຫ້ພົນລະເມືອງມີສຸຂະພາບດີ, ມີອາຍຸຍືນ, ຫຼຸດຜ່ອນ ການຕິດເຊື້ອພະຍາດ, ການເຈັບປ່ວຍ ແລະ ການເສຍຊີວິດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການອະນາໄມ ແລະ ສົ່ງເສີມສຸຂະພາບ**

ການອະນາໄມ ແມ່ນ ການທຳຄວາມສະອາດ, ການກຳຈັດສິ່ງທີ່ເປັນອັນຕະລາຍ ຕໍ່ສຸຂະພາບ ແລະ ການສ້າງສະພາບທີ່ເອື້ອອຳນວຍໃຫ້ແກ່ ການດຳລົງຊີວິດ, ການປະຕິບັດຕົວຈິງທີ່ຊ່ວຍໃຫ້ຄົນເຮົາມີສຸຂະພາບດີ ແລະ ກັນພະຍາດ.

ການສົ່ງເສີມສຸຂະພາບ ແມ່ນ ຂະບວນການໃຫ້ຄວາມຮູ້, ຂໍ້ມູນ ຂ່າວສານ, ສ້າງໃຫ້ຄົນເຮົາມີສະຕິຕື່ນຕົວ ໃນການເບິ່ງແຍງ ແລະ ດູແລສຸຂະພາບຂອງຕົນ, ທຸກຄົນໃນຄອບຄົວ, ຊຸມຊົນ ແລະ ສັງຄົມ ມີສຸຂະພາບດີ ດ້ວຍການຫັນປ່ຽນ ຄວາມຮັບຮູ້, ທັດສະນະຄະຕິ, ພຶດຕິກຳ, ສ້າງສະພາບທີ່ເອື້ອອຳນວຍ, ປະຕິບັດຕາມຫຼັກການ ແລະ ວິທີການຕ່າງໆ ໃຫ້ຖືກຕ້ອງ, ມີແບບແຜນດຳລົງຊີວິດທີ່ດີ ໂດຍເອົາວຽກງານສື່ສານເພື່ອສຸຂະພາບ ແລະ ສຸຂະສຶກສາເປັນໃຈກາງ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສຸຂະພາບດີ** ໝາຍເຖິງ ສະພາບທາງດ້ານ ຮ່າງກາຍ, ຈິດໃຈ, ມັນສະໝອງ ຂອງຄົນ ແລະ ສັງຄົມທີ່ດີ;

2. **ການສ້າງສະພາບທີ່ເອື້ອອຳນວຍ** ໝາຍເຖິງ ການສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ;

3. **ສະຖານທີ່ບໍລິການ** ໝາຍເຖິງ ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ສະຖານທີ່ບັນເທີງ, ຮ້ານສ້ອມແປງລົດ, ຮ້ານເສີມສວຍ, ຮ້ານນວດ, ຮ້ານຕັດຜົມ, ຮ້ານຕັດແວ່ນຕາ, ສູນອອກກຳລັງກາຍ ແລະ ສະຖານທີ່ບໍລິການອື່ນ;

4. **ສະຖານທີ່ບໍລິການສາທາລະນະສຸກ** ໝາຍເຖິງ ໂຮງໝໍ, ຫ້ອງກວດພະຍາດ, ຮ້ານຂາຍຢາ ແລະ ສູນການແພດ;

5. **ສະຖານທີ່ສາທາລະນະ** ໝາຍເຖິງ ສາສະໜາສະຖານ, ປູສະນີຍະສະຖານ, ອະນຸສອນສະຖານ, ສວນສາທາລະນະ, ສະຖານທີ່ທ່ອງທ່ຽວ, ສະໜາມກິລາ, ສະໂມສອນ, ສະໜາມບິນ, ທ່າເຮືອ, ສະຖານີໂດຍສານ ແລະ ສະຖານທີ່ສ່ວນລວມອື່ນ;

6. **ມົນລະພິດ** ໝາຍເຖິງ ສານເຄມີ, ກຳມັນຕະພາບລັງສີ, ຝຸ່ນລະອອງ, ຄວັນ ລວມທັງ ສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນ ທີ່ເຈືອປົນ ໃນອາກາດ, ດິນ, ນ້ຳ ທີ່ມີຄ່າຄວາມເຂັ້ມຂຸ້ນເກີນມາດຕະຖານສິ່ງແວດລ້ອມ ຫຼື ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ທີ່ເກີດຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ມີຜົນກະທົບຕໍ່ສຸຂະພາບ, ຊີວິດ ຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;

7. **ການເຝົ້າລະວັງຄຸນນະພາບນ້ຳ** ໝາຍເຖິງ ການຕິດຕາມ, ກວດກາ, ເກັບກຳຂໍ້ມູນ, ວັດແທກ, ປະເມີນຜົນ ແລະ ທົບທວນຄືນ ຄຸນນະພາບນ້ຳດື່ມ ແລະ ນ້ຳໃຊ້ ຕາມມາດຕະຖານທີ່ກະຊວງສາທາລະນະສຸກ ວາງອອກ;

8. **ອາຍເຮືອນແກ້ວ** ໝາຍເຖິງ ບັນດາທາດອາຍທີ່ປ່ອຍອອກຈາກທຳມະຊາດ ຫຼື ເກີດຈາກການສ້າງຂຶ້ນຂອງມະນຸດ ຂຶ້ນສູ່ຊັ້ນບັນຍາກາດ ແລ້ວກໍ່ຕົວເປັນອາຍເຮືອນແກ້ວ;

9. **ສານອັນຕະລາຍ** ໝາຍເຖິງ ທາດ ຫຼື ສານປະກອບ ທີ່ເປັນພິດ ຫຼື ເປັນອັນຕະລາຍ ຕໍ່ສຸຂະພາບ ຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ເປັນຕົ້ນ ທາດອາເຊນິກ, ທາດບາຫຼອດ, ທາດຊືນ, ສານໄຍຫີນ;

10. **ພະຍາດບໍ່ຕິດຕໍ່** ໝາຍເຖິງ ພະຍາດເສັ້ນເລືອດຫົວໃຈ, ພະຍາດມະເຮັງ, ພະຍາດເບົາຫວານ ແລະ ພະຍາດອື່ນ ທີ່ເກີດຈາກພຶດຕິກຳ, ສິ່ງແວດລ້ອມ ຫຼື ພັນທຸກຳ;

11. **ໂພຊະນາການ** ໝາຍເຖິງ ຂະບວນການ ໃນການຜະລິດ, ການແຈກຢາຍ, ການປຸງແຕ່ງ ທີ່ໄດ້ມາດຕະຖານ ແລະ ການບໍລິໂພກອາຫານ ທີ່ປອດໄພ, ມີປະໂຫຍດ, ຫຼາກຫຼາຍ ແລະ ຄົບໝວດ;

12. **ຫຼັກການສຸຂານາໄມ** ໝາຍເຖິງ ກົດລະບຽບ, ມາດຕະການຕ່າງໆ ທີ່ຈຳເປັນຕ້ອງປະຕິບັດ ຕາມທີ່ກະຊວງສາທາລະນະສຸກ ວາງອອກ ເພື່ອກັນການເກີດ ແລະ/ຫຼື ການແຜ່ລະບາດ ຂອງພະຍາດ ແລະ ຮັບປະກັນໃຫ້ຄົນມີສຸຂະພາບດີ;

13. **ສິ່ງເສດເຫຼືອ** ໝາຍເຖິງ ນ້ຳມັນປ່ຽນຖ່າຍ, ຂີ້ເຫຍື້ອ, ນ້ຳເປື້ອນ, ອາຈົມຄົນ ຫຼື ສັດ, ເຊື້ອພະຍາດ, ກຳມັນຕະພາບລັງສີ, ສານພິດ ຫຼື ສິ່ງອື່ນໆ ທີ່ ອາດຈະເກີດ ຫຼື ກໍ່ໃຫ້ເກີດພະຍາດ ແລະ ມີຜົນກະທົບຕໍ່ສຸຂະພາບ;

14. **ຜູ້ສຳຜັດກັບອາຫານ** ໝາຍເຖິງ ບຸກຄົນທີ່ ເຮັດວຽກໂດຍກົງກັບການບໍລິການອາຫານ, ບຸກຄົນທີ່ຈັບບາຍອາຫານ ຫຼື ວັດຖຸປະກອບ ແລະ ເຄື່ອງໃຊ້ອື່ນ ທີ່ນຳໃຊ້ສຳຜັດອາຫານ ແລະ ຜູ້ອື່ນທີ່ມີສ່ວນຮ່ວມໃນການຜະລິດ, ປຸງແຕ່ງອາຫານ ແລະ ບໍລິການອາຫານ;

15. **ເດັກອ່ອນ** ໝາຍເຖິງ ເດັກທີ່ມີອາຍຸ ແຕ່ວັນເກີດ ຫາ ສິບສອງເດືອນ;

16. **ເດັກນ້ອຍ** ໝາຍເຖິງ ເດັກທີ່ມີອາຍຸ ສູງກວ່າ ສິບສອງເດືອນ ຫາ ສາມສິບຫົກເດືອນ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ**

ລັດ ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ ຕໍ່ການອະນາໄມ ແລະ ສົ່ງເສີມສຸຂະພາບ ຂອງປະຊາຊົນລາວບັນດາເຜົ່າ ໂດຍຖືເອົາວຽກງານຮັກສາສຸຂະພາບຂັ້ນຕົ້ນເປັນພື້ນຖານໃຫ້ແກ່ການບັນລຸການປົກຄຸມສຸຂະພາບທົ່ວປວງຊົນ.

ລັດ ສ້າງ ແລະ ປະກອບ ບຸກຄະລະກອນ, ກໍ່ສ້າງໂຄງລ່າງພື້ນຖານ, ສະໜອງງົບປະມານ, ວັດຖຸປະກອບ, ພາຫະນະ, ຂໍ້ມູນ ຂ່າວສານ, ໂຄສະນາ ເຜີຍແຜ່, ປຸກຈິດສຳນຶກ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ທົ່ວເຖິງ ທັງຕົວເມືອງ, ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ ແລະ ທັນການ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນ, ມີສ່ວນຮ່ວມ ຫຼື ປະກອບສ່ວນເຂົ້າໃນວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ**

ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາວຽກງານສາທາລະນະສຸກ ໃນແຕ່ລະໄລຍະ;

2. ສະໜອງການບໍລິການ ທີ່ມີຄຸນນະພາບ, ສະເໝີພາບ, ທົ່ວເຖິງ, ໂປ່ງໃສ ແລະ ເປັນທຳ;

3. ຖືເອົາການສື່ສານເພື່ອສຸຂະພາບ, ໂຄສະນາສຸຂະສຶກສາ, ອົບຮົມວິຊາການ ແລະ ໃຫ້ຄຳແນະນຳເປັນສຳຄັນ ໃນການພັດທະນາວຽກງານສາທາລະນະສຸກ;

4. ຮັບປະກັນ ການປະສານສົມທົບ, ການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ;

5. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 (ປັບປຸງ) ສິດ ແລະ ພັນທະຂອງພົນລະເມືອງ ໃນການອະນາໄມ ແລະ ສົ່ງເສີມສຸຂະພາບ**

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກ ເພດ, ໄວ, ຊົນເຜົ່າ, ເຊື້ອຊາດ, ສັນຊາດ, ສາສະໜາ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ ລ້ວນແຕ່ມີສິດ ໄດ້ຮັບຂໍ້ມູນ ຂ່າວສານ, ການແນະນຳ ດ້ານການອະນາໄມ ແລະ ສົ່ງເສີມສຸຂະພາບ ແລະ ມີພັນທະໃນການສະໜອງຂໍ້ມູນ ຂ່າວສານ, ລາຍງານສະພາບການ ທີ່ສົ່ງຜົນກະທົບຕໍ່ສຸຂະພາບ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ລວມທັງການຮັກສາສຸຂະພາບ ຂອງຕົນເອງ, ຄອບຄົວ, ຊຸມຊົນ ແລະ ສັງຄົມ.

ທົ່ວປວງຊົນ ຕ້ອງປຸກຈິດສຳນຶກ ດ້ວຍການສຶກສາອົບຮົມ, ໂຄສະນາ ເຜີຍແຜ່ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໂດຍທາງກົງ ແລະ ທາງອ້ອມ ຜ່ານສື່ມວນຊົນ ພ້ອມທັງຊຸກຍູ້ ແລະ ສົ່ງເສີມການສ້າງ

ກິດຈະກຳຕ່າງໆ ເພື່ອໃຫ້ທຸກຄົນມີຄວາມເຂົ້າໃຈ ແລະ ເຫັນໄດ້ເຖິງຄວາມສຳຄັນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຂະຫຍາຍຕົວ, ເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການອະນາໄມ

**ມາດຕາ 9 (ປັບປຸງ) ຄວາມສຳຄັນ ແລະ ຈຳເປັນ ຂອງການອະນາໄມ**

ການອະນາໄມ ເປັນວຽກງານທີ່ມີຄວາມສຳຄັນ ແລະ ຈຳເປັນ ຕໍ່ການດຳລົງຊີວິດປະຈຳວັນ ຂອງທຸກຄົນໃນສັງຄົມ ທີ່ຕ້ອງໄດ້ປະຕິບັດຢ່າງເປັນປົກກະຕິ ເພື່ອເຮັດໃຫ້ມີສຸຂະພາບດີ, ມີສຸຂານາໄມທີ່ດີ, ມີອາຍຸຍືນ ແລະ ຫຼຸດຜ່ອນການເກີດພະຍາດ.

ບຸກຄົນ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ຕ້ອງເອົາໃຈໃສ່ ໃນການຮັກສາອະນາໄມ ຢ່າງເປັນປົກກະຕິ.

**ມາດຕາ 10 (ໃໝ່) ວຽກງານອະນາໄມ**

ວຽກງານອະນາໄມ ມີ ດັ່ງນີ້:

1. ການອະນາໄມສິ່ງແວດລ້ອມ;
2. ການອະນາໄມ ອາຫານ, ເຄື່ອງບໍລິໂພກ, ນ້ຳດື່ມ ແລະ ນ້ຳໃຊ້;
3. ການອະນາໄມໃນການປະກອບອາຊີບ;
4. ການອະນາໄມໃນເຂດໄພພິບັດ.

# ໝວດທີ 1
# ການອະນາໄມສິ່ງແວດລ້ອມ

**ມາດຕາ 11 (ປັບປຸງ) ການອະນາໄມສິ່ງແວດລ້ອມ**

ການອະນາໄມສິ່ງແວດລ້ອມ ແມ່ນ ການທຳຄວາມສະອາດ, ການກຳຈັດສິ່ງແວດລ້ອມທີ່ເປັນອັນຕະລາຍ, ການສ້າງສະພາບທີ່ເອື້ອອຳນວຍໃນການກັນ, ຄວບຄຸມ ແລະ ກຳຈັດ ປັດໃຈສ່ຽງທີ່ເກີດຈາກທຳມະຊາດ ຫຼື ພຶດຕິກຳຂອງຄົນ ທີ່ຈະເຮັດໃຫ້ເກີດຜົນກະທົບຕໍ່ສຸຂະພາບຂອງບຸກຄົນ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ໂດຍທາງກົງ ແລະ ທາງອ້ອມ.

ການອະນາໄມສິ່ງແວດລ້ອມ ມີ ດັ່ງນີ້:

1. ການອະນາໄມສ່ວນບຸກຄົນ;
2. ການອະນາໄມຄອບຄົວ;
3. ການອະນາໄມຊຸມຊົນ;
4. ການອະນາໄມເຄຫາສະຖານ;
5. ການອະນາໄມສະຖານທີ່ບໍລິການ;
6. ການອະນາໄມສະຖານການສຶກສາ;
7. ການອະນາໄມສະຖານທີ່ບໍລິການສາທາລະນະສຸກ;
8. ການອະນາໄມສະຖານທີ່ສາທາລະນະ;
9. ການອະນາໄມຕະຫຼາດ;
10. ການອະນາໄມສະຖານທີ່ ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ;
11. ການອະນາໄມໃນການຊາປະນະກິດສົບ;
12. ການອະນາໄມສິ່ງເສດເຫຼືອ.

**ມາດຕາ 12 (ປັບປຸງ) ການອະນາໄມສ່ວນບຸກຄົນ**

ການອະນາໄມສ່ວນບຸກຄົນ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການດຳລົງຊີວິດ, ການປະຕິບັດຕົວຈິງ ໃນການບຳລຸງຮັກສາຮ່າງກາຍ, ຈິດໃຈ ຂອງຕົນ ເພື່ອຫຼີກເວັ້ນການເຈັບເປັນ ຫຼື ເກີດພະຍາດ ແລະ ສາມາດດຳລົງຊີວິດຢູ່ໃນສັງຄົມ ຢ່າງເປັນປົກກະຕິ.

ທຸກຄົນ ຕ້ອງເອົາໃຈໃສ່ ຮັກສາສຸຂະພາບໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ດ້ວຍການທຳຄວາມສະອາດ, ອະນາໄມໃນການກິນ, ການດື່ມ, ການຢູ່, ການນອນ, ການນຸ່ງຫົ່ມ, ການອອກກຳລັງກາຍ, ການພັກຜ່ອນ, ການມີເພດສຳພັນທີ່ປອດໄພ ແລະ ການບໍ່ຖ່າຍຊະຊາຍ.

**ມາດຕາ 13 (ປັບປຸງ) ການອະນາໄມຄອບຄົວ**

ການອະນາໄມຄອບຄົວ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການດຳລົງຊີວິດ, ການປະຕິບັດຕົວຈິງ ໃນການເບິ່ງແຍງດູແລສະມາຊິກຄອບຄົວ, ການຮັກສາຄວາມສະອາດເຮືອນຊານ, ທີ່ດິນເປົ່າວ່າງ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຈົບງາມ ແລະ ໜ້າຢູ່ສະເໝີ, ກຳຈັດສິ່ງທີ່ເປັນອັນຕະລາຍ ຫຼື ອາດຈະເປັນອັນຕະລາຍຕໍ່ສຸຂະພາບ ເພື່ອໃຫ້ສະມາຊິກຄອບຄົວ ມີສຸຂະພາບດີ ແລະ ກັນພະຍາດ.

ທຸກຄອບຄົວ ຕ້ອງເອົາໃຈໃສ່ ສ້າງເງື່ອນໄຂ ໃຫ້ມີນ້ຳສະອາດດື່ມ ແລະ ໃຊ້, ມີອາຫານກິນທີ່ມີຄຸນຄ່າທາງດ້ານໂພຊະນາການ, ມີຄວາມປອດໄພ, ມີວິດຖ່າຍ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ, ມີເຄື່ອງນຸ່ງຫົ່ມ ທີ່ສະອາດເໝາະສົມ, ນຳເອົາລູກ ຫຼານ ໄປກວດສຸຂະພາບຢ່າງເປັນປົກກະຕິ ແລະ ປິ່ນປົວເວລາເຈັບເປັນ, ຮັບປະກັນການອະນາໄມສາມສະອາດ, ເປັນເຈົ້າການໃນການກຳຈັດ ນ້ຳເປື້ອນ, ຂີ້ເຫຍື້ອ ແລະ ແຍກຂີ້ເຫຍື້ອຂັ້ນພື້ນຖານ, ອະນາໄມຄອກສັດ, ສຶກສາອົບຮົມ ໃຫ້ຮູ້ຄວາມເປັນອັນຕະລາຍ ຂອງການສູບຢາ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ໃຫ້ຫຼີກເວັ້ນ ການເສບຢາເສບຕິດ ແລະ ການມີເພດສຳພັນທີ່ບໍ່ປອດໄພ, ປະເມີນສະພາບການອະນາໄມຄອບຄົວຂອງຕົນ ຢ່າງເປັນປົກກະຕິ.

**ມາດຕາ 14 (ປັບປຸງ) ການອະນາໄມຊຸມຊົນ**

ການອະນາໄມຊຸມຊົນ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການດຳລົງຊີວິດ, ການປະຕິບັດຕົວຈິງ ໃນການຮັກສາຄວາມສະອາດ, ຈົບງາມ, ກຳຈັດສິ່ງທີ່ເປັນອັນຕະລາຍ ຫຼື ອາດຈະເປັນອັນຕະລາຍຕໍ່ສຸຂະພາບ ຮ່ວມກັນພາຍໃນ ໜ່ວຍ, ຄຸ້ມ, ບ້ານ, ເມືອງ, ເທດສະບານ, ນະຄອນ ເພື່ອໃຫ້ສະມາຊິກໃນຊຸມຊົນມີສຸຂະພາບດີ ແລະ ກັນພະຍາດ.

ຊຸມຊົນ ມີຄວາມຮັບຜິດຊອບ ແລະ ມີສ່ວນຮ່ວມໃນການປຸກລະດົມ, ໂຄສະນາ ເຜີຍແຜ່ ແລະ ເປັນເຈົ້າການກຳຈັດ ຂີ້ເຫຍື້ອ, ນ້ຳເປື້ອນ, ອາຈົມສັດ ແລະ ຮັກສາອະນາໄມແຫຼ່ງນ້ຳ, ອະນາໄມຖະໜົນຫົນທາງ, ຕະຄອງ, ຮ່ອງນ້ຳ, ຫ້ອງນ້ຳ, ວິດຖ່າຍ ແລະ ສະຖານທີ່ສາທາລະນະອື່ນ ໃນຊຸມຊົນ.

ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຈັດຕັ້ງປະຕິບັດແຜນອະນາໄມຊຸມຊົນ ແລະ ປະເມີນຜົນດ້ວຍການມີສ່ວນຮ່ວມຂອງຊຸມຊົນ.

**ມາດຕາ 15 (ປັບປຸງ) ການອະນາໄມເຄຫາສະຖານ**

ການອະນາໄມເຄຫາສະຖານ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການດຳລົງຊີວິດ, ການປະຕິບັດຕົວຈິງ ໃນການຮັກສາຄວາມສະອາດ, ຈົບງາມ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍຂອງເຄຫາສະຖານ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອໃຫ້ສາມາດດຳລົງຊີວິດ ແລະ ປະຕິບັດວຽກງານທີ່ປາສະຈາກມົນລະພິດ, ຜົນກະທົບຕໍ່ສຸຂະພາບ ແລະ ຄວາມສ່ຽງໃນການຕິດເຊື້ອພະຍາດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງມີຄວາມຮັບຜິດຊອບໃນການອະນາໄມເຄຫາສະຖານ ເປັນຕົ້ນ ກຳຈັດ ແຫຼ່ງເພາະພັນເຊື້ອພະຍາດ, ພາຫະນຳເຊື້ອພະຍາດ, ມີບ່ອນເກັບມ້ຽນ, ກຳຈັດຂີ້ເຫຍື້ອ ແລະ ບຳບັດນ້ຳເປື້ອນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ.

ໃນການອະນາໄມເຄຫາສະຖານນັ້ນ ສາມາດດຳເນີນ ດ້ວຍຕົນເອງ ຫຼື ນຳໃຊ້ການບໍລິການ ຕາມລະບຽບການ.

**ມາດຕາ 16 (ໃໝ່) ການອະນາໄມສະຖານທີ່ບໍລິການ**

ການອະນາໄມສະຖານທີ່ບໍລິການ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການດຳລົງຊີວິດ, ການປະຕິບັດຕົວຈິງ ໃນການຮັກສາຄວາມສະອາດ, ຈົບງາມ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ຄວາມປອດໄພຂອງສະຖານທີ່ບໍລິການ ເພື່ອຫຼີກເວັ້ນການເກີດພະຍາດ ແລະ ຜົນກະທົບຕໍ່ສຸຂະພາບ.

ສະຖານທີ່ບໍລິການ ຕ້ອງມີເນື້ອທີ່ພຽງພໍ ແລະ ເໝາະສົມ ກັບຈຳນວນຄົນທີ່ມາໃຊ້ບໍລິການ, ມີແສງສະຫວ່າງ, ມີອາກາດຖ່າຍເທ, ມີຫ້ອງນ້ຳ, ມີວິດຖ່າຍ, ມີນ້ຳໃຊ້, ມີບ່ອນ ເກັບມ້ຽນ, ກຳຈັດ ຂີ້ເຫຍື້ອ ແລະ ບຳບັດນ້ຳເປື້ອນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ.

ຜູ້ປະກອບການ, ເຈົ້າຂອງສະຖານທີ່ບໍລິການ ຫຼື ຜູ້ໃຊ້ບໍລິການ ຕ້ອງປະຕິບັດຕາມຫຼັກການສຸຂານາໄມ.

**ມາດຕາ 17 (ປັບປຸງ) ການອະນາໄມສະຖານການສຶກສາ**

ການອະນາໄມສະຖານການສຶກສາ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການຮຽນ-ການສອນ, ການຮັກສາຄວາມສະອາດ, ຈົບງາມ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ຄວາມປອດໄພ ເພື່ອຮັບປະກັນໃຫ້ທຸກຄົນໃນສະຖານການສຶກສາ ມີສຸຂະພາບດີ ແລະ ກັນພະຍາດ.

ສະຖານການສຶກສາ ຕ້ອງມີມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ, ມີສິ່ງອຳນວຍຄວາມສະດວກທີ່ຈຳເປັນສຳລັບເພດຍິງ, ເດັກນ້ອຍ ແລະ ຄົນພິການ ລວມທັງການຈັດຫາ ໃຫ້ມີ ນ້ຳດື່ມ, ນ້ຳໃຊ້, ນ້ຳລ້າງມື, ຫ້ອງນ້ຳ, ວິດຖ່າຍ, ມີບ່ອນ ເກັບມ້ຽນ, ກຳຈັດ ຂີ້ເຫຍື້ອ ແລະ ບຳບັດນ້ຳເປື້ອນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ.

ຂະແໜງການ ສາທາລະນະສຸກ, ສຶກສາທິການ ແລະ ກິລາ ຕ້ອງເອົາວຽກງານອະນາໄມເຂົ້າໃນຫຼັກສູດການຮຽນ-ການສອນ.

**ມາດຕາ 18 (ປັບປຸງ) ການອະນາໄມສະຖານທີ່ບໍລິການສາທາລະນະສຸກ**

ການອະນາໄມສະຖານທີ່ບໍລິການສາທາລະນະສຸກ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍໃຫ້ແກ່ການປະຕິບັດໜ້າທີ່ຂອງພະນັກງານສາທາລະນະສຸກ ແລະ ຜູ້ໃຊ້ບໍລິການ, ການຮັກສາຄວາມສະອາດ, ຈົບງາມ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ຄວາມປອດໄພ ລວມທັງການຈັດການ, ຄຸ້ມຄອງ, ຄວບຄຸມ ແລະ ປັບປຸງສະຖານທີ່ດັ່ງກ່າວ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອຫຼີກເວັ້ນການເກີດພະຍາດ, ສິ່ງພົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ສະຖານທີ່ບໍລິການສາທາລະນະສຸກ ຕ້ອງຮັບປະກັນໃຫ້ມີ ເຄື່ອງມື, ເຄື່ອງຮັບໃຊ້ ແລະ ອຸປະກອນການແພດ ທີ່ອະເຊື້ອ ແລະ ປອດໄພ, ມີ ຫ້ອງນ້ຳ, ວິດຖ່າຍ, ສະບູ, ນ້ຳດື່ມ, ນ້ຳໃຊ້ ຢ່າງພຽງພໍ, ມີບ່ອນ ເກັບມ້ຽນ, ກຳຈັດ ຂີ້ເຫຍື້ອ, ມີລະບົບບຳບັດນ້ຳເປື້ອນ ແລະ ສິ່ງອຳນວຍຄວາມສະດວກອື່ນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ.

**ມາດຕາ 19 (ປັບປຸງ) ການອະນາໄມສະຖານທີ່ສາທາລະນະ**

ການອະນາໄມສະຖານທີ່ສາທາລະນະ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການພັກຜ່ອນ, ອອກກຳລັງກາຍ, ຈັດກິດຈະກຳຕ່າງໆ, ການຮັກສາຄວາມສະອາດ, ຈົບງາມ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ຄວາມປອດໄພ ລວມທັງການຈັດການ, ຄວບຄຸມ, ຮັກສາ ແລະ ປັບປຸງສະຖານທີ່ດັ່ງກ່າວ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອຫຼີກເວັ້ນການເກີດພະຍາດ, ສິ່ງພົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ສະຖານທີ່ສາທາລະນະ ຕ້ອງຮັບປະກັນໃຫ້ມີ ບ່ອນຈອດລົດ, ຫ້ອງນ້ຳ, ວິດຖ່າຍ, ສະບູ, ນ້ຳດື່ມ, ນ້ຳໃຊ້ ຢ່າງພຽງພໍ, ມີບ່ອນ ເກັບມ້ຽນ, ແຍກປະເພດ, ກຳຈັດ ຂີ້ເຫຍື້ອ ແລະ ລະບົບບຳບັດນ້ຳເປື້ອນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ພ້ອມທັງຈັດຕັ້ງໃຫ້ມີໜ່ວຍງານຮັບຜິດຊອບສະຖານທີ່ສາທາລະນະ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊົມໃຊ້ສະຖານທີ່ສາທາລະນະ ຕ້ອງປະຕິບັດຕາມຫຼັກການສຸຂານາໄມ ຢ່າງເຂັ້ມງວດ.

## ມາດຕາ 20 (ປັບປຸງ) ການອະນາໄມຕະຫຼາດ

ການອະນາໄມຕະຫຼາດ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການບໍລິການ, ຈຳໜ່າຍ, ແລກປ່ຽນ, ຊື້ ຂາຍ ສິນຄ້າ, ການຮັກສາຄວາມສະອາດ, ຈົບງາມ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ຄວາມປອດໄພ ລວມທັງການກຳຈັດແຫຼ່ງເພາະພັນເຊື້ອພະຍາດ ແລະ ພາຫະນຳເຊື້ອພະຍາດ, ການຮັກສາ ແລະ ປັບປຸງຕະຫຼາດ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອຫຼີກເວັ້ນການເກີດພະຍາດ, ສິ່ງພິນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ຕະຫຼາດ ຕ້ອງຮັບປະກັນໃຫ້ມີ ແສງສະຫວ່າງ, ລະບົບລະບາຍອາກາດ, ມີ ນ້ຳໃຊ້, ຫ້ອງນ້ຳ, ວິດຖ່າຍທີ່ສະອາດ ພຽງພໍ, ມີການຄຸ້ມຄອງ, ມີລະບົບການຈັດສັນ ແລະ ຈັດວາງສິນຄ້າ ເຄື່ອງອຸປະໂພກ ແລະ ເຄື່ອງບໍລິໂພກ, ມີບ່ອນ ເກັບມ້ຽນ, ກຳຈັດ ຂີ້ເຫຍື້ອ ແລະ ບຳບັດນ້ຳເປື້ອນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ.

ທີ່ຕັ້ງຂອງຕະຫຼາດ ຕ້ອງຢູ່ຫ່າງຈາກສະຖານທີ່ ທີ່ມີຄວາມສ່ຽງ ແລະ ສິ່ງພິນກະທົບຕໍ່ສຸຂະພາບ ເປັນຕົ້ນ ໂຮງງານອຸດສາຫະກຳ, ບ່ອນລ້ຽງສັດ, ປ່າຊ້າ, ບ່ອນຖິ້ມຂີ້ເຫຍື້ອ.

## ມາດຕາ 21 (ປັບປຸງ) ການອະນາໄມສະຖານທີ່ ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ

ການອະນາໄມສະຖານທີ່ ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ຄວາມປອດໄພ ລວມທັງການຈັດການ, ຄວບຄຸມ, ຮັກສາ ແລະ ປັບປຸງສະຖານທີ່ດັ່ງກ່າວ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອຫຼີກເວັ້ນການເກີດພະຍາດ ແລະ ສິ່ງພິນກະທົບຕໍ່ສຸຂະພາບ ຂອງເຈົ້າໜ້າທີ່, ຜູ້ຖືກຫາ ແລະ ນັກໂທດ.

ສະຖານທີ່ ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ຕ້ອງມີເນື້ອທີ່ເໝາະສົມ ແລະ ພຽງພໍ ກັບຈຳນວນຜູ້ຖືກຫາ, ນັກໂທດ, ມີ ນ້ຳດື່ມ, ນ້ຳໃຊ້ ທີ່ສະອາດ, ຫ້ອງນ້ຳ, ວິດຖ່າຍ, ມີບ່ອນ ເກັບມ້ຽນ, ກຳຈັດ ຂີ້ເຫຍື້ອ ແລະ ບຳບັດນ້ຳເປື້ອນ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ພ້ອມກັນນັ້ນ ກໍຕ້ອງໃຫ້ຄວາມຮູ້, ຂໍ້ມູນຂ່າວສານ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ແລະ ໃຫ້ການບໍລິການທາງດ້ານສຸຂະພາບ ຢ່າງເໝາະສົມ.

ສະຖານທີ່ ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ຍັງຕ້ອງມີມາດຕະການ ກ່ຽວກັບການແຍກ ຫຼື ແຍກປ່ຽວຄົນເຈັບໃນບາງພະຍາດຕິດຕໍ່ ເຊັ່ນ ວັນນະໂລກ, ພະຍາດເອດ, ອີໂບລາ, ໄຂ້ເລືອດດຳ, ກາລະໂຣກ ຫຼື ພະຍາດອື່ນ ທີ່ອາດເກີດຂຶ້ນໃນແຕ່ລະໄລຍະ ຊຶ່ງສາມາດແຜ່ລະບາດໄດ້ ແລະ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

## ມາດຕາ 22 (ປັບປຸງ) ການອະນາໄມໃນການຊາປະນະກິດສົບ

ການອະນາໄມໃນການຊາປະນະກິດສົບ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການມ້ຽນຄາບ, ສິ່ງສະການ, ເຄື່ອນຍ້າຍ, ຈູດເຜົາ ຫຼື ຝັງ ຊາກສົບ, ມ້ຽນມັດ ອະນາໄມສະຖານທີ່ຈັດງານພາຍຫຼັງສຳເລັດການຊາປະນະກິດສົບ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອຫຼີກເວັ້ນການເກີດພະຍາດ, ສິ່ງພິນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ຊາກສົບ ຕ້ອງໃສ່ ຢາ, ຟອກໂມນ, ຫຸ້ມຫໍ່, ໃສ່ຫີບ ຫຼື ແຊ່ເຢັນ ແລະ ເກັບຮັກສາໄວ້ໃນສະຖານທີ່ ແລະ ເວລາທີ່ເໝາະສົມ ເພື່ອຮັບປະກັນບໍ່ໃຫ້ມີການຕິດຕໍ່ຂອງເຊື້ອພະຍາດ ແລະ ສິ່ງກິ່ນເໝັນ. ສຳ

ລັບການຊາປະນະກິດສົບຜູ້ເສຍຊີວິດ ຍ້ອນພະຍາດຕິດຕໍ່ຮ້າຍແຮງ ເປັນຕົ້ນ ອີໂບລາ, ກາລະໂຣກ, ໄຂ້ຫວັດສັດປີກ, ໄຂ້ເລືອດດຳ ຕ້ອງປະຕິບັດຕາມລະບຽບການຂອງອົງການອະນາໄມໂລກ.

ສະຖານທີ່ສົ່ງສະການ ຈູດເຜົາ ຫຼື ຝັງ ຊາກສົບ ຕ້ອງຫ່າງຈາກເຂດຕົວເມືອງ ຫຼື ຊຸມຊົນ ເພື່ອຮັບປະກັນບໍ່ໃຫ້ສົ່ງຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ ບົນພື້ນຖານການຕົກລົງເຫັນດີຂອງຂະແໜງການທີ່ກ່ຽວຂ້ອງ.

ການເຄື່ອນຍ້າຍຊາກສົບ ຫຼື ອັດຖິ ເຂົ້າ-ອອກ ຫຼື ຜ່ານ ສປປ ລາວ ຕ້ອງຮັບປະກັນຕາມຫຼັກການສຸຂານາໄມ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 23 (ໃໝ່) ການອະນາໄມສິ່ງເສດເຫຼືອ**

ການອະນາໄມສິ່ງເສດເຫຼືອ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການແຍກປະເພດ, ເກັບມ້ຽນ, ເຄື່ອນຍ້າຍ, ບຳບັດ ແລະ ການທຳລາຍ ສິ່ງເສດເຫຼືອ ລວມທັງການກຳນົດຫຼັກການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ ກວດກາ ເພື່ອຫຼີກເວັ້ນການເກີດພະຍາດ, ສິ່ງຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ ຕ້ອງເປັນເຈົ້າການຮັບຜິດຊອບ ແລະ ມີສ່ວນຮ່ວມໃນການອະນາໄມສິ່ງເສດເຫຼືອ, ການສ້າງ ແລະ ນຳໃຊ້ ວິດຖ່າຍ ແນໃສ່ຢຸດເຊົາການຖ່າຍຊະຊາຍ.

ສຳລັບຜູ້ບໍລິການ ໃນການອະນາໄມສິ່ງເສດເຫຼືອ ຕ້ອງໄດ້ປະຕິບັດຕາມຫຼັກການສຸຂານາໄມ ແລະ ກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ໝວດທີ 2
## ການອະນາໄມ ອາຫານ, ເຄື່ອງບໍລິໂພກ, ນ້ຳດື່ມ ແລະ ນ້ຳໃຊ້

**ມາດຕາ 24 (ປັບປຸງ) ການອະນາໄມ ອາຫານ ແລະ ເຄື່ອງບໍລິໂພກ**

ການອະນາໄມ ອາຫານ ແລະ ເຄື່ອງບໍລິໂພກ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການຜະລິດ, ປຸງແຕ່ງ, ບັນຈຸ, ຫຸ້ມຫໍ່, ເຄື່ອນຍ້າຍ, ເກັບຮັກສາ ແລະ ຈຳໜ່າຍ ອາຫານ ແລະ ເຄື່ອງບໍລິໂພກ ລວມທັງການນຳໃຊ້ວັດຖຸປະກອນ, ເຄື່ອງມື, ພາຊະນະ ແລະ ສະຖານທີ່ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອໃຫ້ອາຫານ ແລະ ເຄື່ອງບໍລິໂພກມີຄວາມສະອາດ ແລະ ປອດໄພ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜະລິດ, ປຸງແຕ່ງ ແລະ ໃຫ້ບໍລິການ ອາຫານ ແລະ ເຄື່ອງບໍລິໂພກ ຕ້ອງຮັບປະກັນຄຸນນະພາບ, ຖືກຕ້ອງຕາມຫຼັກການສຸຂານາໄມ ແລະ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ພ້ອມກັນນັ້ນ ກໍຕ້ອງໃຫ້ຂໍ້ມູນທີ່ຖືກຕ້ອງ ກ່ຽວກັບອາຫານ ແລະ ເຄື່ອງບໍລິໂພກ ແກ່ຜູ້ບໍລິໂພກ.

ສຳລັບຜູ້ສຳຜັດກັບອາຫານ ຕ້ອງໄດ້ຮັບການກວດສຸຂະພາບ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ ດັ່ງດຽວກັນກັບຜູ້ປຸງແຕ່ງອາຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານ.

ອາຫານ ແລະ ເຄື່ອງບໍລິໂພກ ທີ່ຜະລິດຢູ່ພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ ຕ້ອງໄດ້ຜ່ານການກວດກາທາງດ້ານຄຸນນະພາບ ແລະ ອະນາໄມ ຈາກຂະແໜງການສາທາລະນະສຸກ ໂດຍປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ມາດຕາ 25 (ປັບປຸງ) ການອະນາໄມ ນ້ຳດື່ມ ແລະ ນ້ຳໃຊ້

ການອະນາໄມ ນ້ຳດື່ມ ແລະ ນ້ຳໃຊ້ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການບຳບັດນ້ຳ ຫຼື ກຳຈັດເຊື້ອພະຍາດ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເປັນຕົ້ນ ການຕົ້ມ, ການກັ່ນຕອງ, ການນຳໃຊ້ ນ້ຳຢາ, ແສງຕາເວັນ ຫຼື ແສງອື່ນ ເພື່ອຮັບປະກັນຄວາມສະອາດ ແລະ ປອດໄພ.

ການຜະລິດ ແລະ ການບໍລິການ ນ້ຳດື່ມ ແລະ ນ້ຳໃຊ້ ຕ້ອງໄດ້ມາດຕະຖານ ຕາມທີ່ກະຊວງສາທາລະນະສຸກ ວາງອອກ.

ສຳລັບນ້ຳດື່ມ ແລະ ນ້ຳໃຊ້ ທີ່ໄດ້ມາຈາກ ນ້ຳຝົນ, ນ້ຳສ້າງ, ນ້ຳບາດານ, ນ້ຳລິນ, ນ້ຳອອກບໍ່, ບໍ່ນ້ຳອຸ່ນ, ແມ່ນ້ຳ, ລຳເຊ, ນ້ຳຫ້ວຍ ຕ້ອງໄດ້ຜ່ານຂະບວນການບຳບັດນ້ຳ ຫຼື ການກຳຈັດເຊື້ອພະຍາດ.

## ໝວດທີ 3
## ການອະນາໄມໃນການປະກອບອາຊີບ

ມາດຕາ 26 (ປັບປຸງ) ການອະນາໄມໃນການປະກອບອາຊີບ

ການອະນາໄມໃນການປະກອບອາຊີບ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ຜູ້ອອກແຮງງານ ຫຼື ຜູ້ປະກອບອາຊີບ ຢູ່ສະຖານທີ່ອອກແຮງງານ ຫຼື ປະກອບອາຊີບ ເພື່ອຮັກສາ ຄວາມປອດໄພ, ສຸຂະພາບ ຫຼື ຊີວິດຂອງຜູ້ອອກແຮງງານ ຫຼື ຜູ້ປະກອບອາຊີບ ແລະ ບຸກຄົນອ້ອມຂ້າງ.

ຜູ້ໃຊ້ແຮງງານ ຕ້ອງປະຕິບັດຕາມຫຼັກການສຸຂານາໄມ ໃນສະຖານທີ່ອອກແຮງງານ ຫຼື ປະກອບອາຊີບ ຢ່າງເຂັ້ມງວດ ເປັນຕົ້ນ ໃຫ້ຄວາມຮູ້, ຂໍ້ມູນ ຂ່າວສານ ກ່ຽວກັບຄວາມສ່ຽງຂອງວຽກງານ, ສະໜອງວັດຖຸປ້ອງກັນ ການກະທົບ ຫຼື ສຳຜັດ ວັດຖຸ, ເຄມີ, ສານອັນຕະລາຍ, ເຊື້ອພະຍາດ ແລະ ຕ້ອງໄດ້ກວດສຸຂະພາບ ໃຫ້ແກ່ຜູ້ອອກແຮງງານ ຫຼື ຜູ້ປະກອບອາຊີບ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ, ສຳລັບຜູ້ອອກແຮງງານ ຫຼື ຜູ້ປະກອບອາຊີບ ທີ່ເຮັດວຽກໃນສະຖານທີ່ ທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍຕໍ່ສຸຂະພາບ ເປັນຕົ້ນ ເຊື້ອພະຍາດ, ເຄມີ, ກຳມັນຕະພາບລັງສີ, ປາລະມະນູ ຕ້ອງໄດ້ກວດສຸຂະພາບ ຢ່າງໜ້ອຍ ສອງຄັ້ງຕໍ່ປີ.

ມາດຕາ 27 (ປັບປຸງ) ການອະນາໄມໃນການຜະລິດ

ການອະນາໄມໃນການຜະລິດ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການຜະລິດ ເພື່ອຮັບປະກັນໃຫ້ວິທີການ ແລະ ຂັ້ນຕອນການຜະລິດ ເຄື່ອງບໍລິໂພກ ແລະ ອຸປະໂພກ ຖືກຕ້ອງຕາມມາດຕະຖານ ແລະ ຫຼັກການສຸຂານາໄມ ເປັນຕົ້ນ ການຜະລິດ ເຄື່ອງໃຊ້ສອຍປະຈຳວັນ, ເຄື່ອງຫຼິ້ນເດັກນ້ອຍ, ເຄື່ອງສຳອາງ ເພື່ອບໍ່ໃຫ້ມີເຊື້ອພະຍາດ ແລະ ສານເຄມີຕົກຄ້າງ ທີ່ອາດສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ຊົມໃຊ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜະລິດເຄື່ອງບໍລິໂພກ ແລະ ອຸປະໂພກ ຕ້ອງຮັບປະກັນການກຳຈັດສິ່ງເສດເຫຼືອ ຕາມຫຼັກການສຸຂານາໄມ.

ມາດຕາ 28 (ປັບປຸງ) ການອະນາໄມ ໃນການກໍ່ສ້າງ ແລະ ສ້ອມແປງ

ການອະນາໄມ ໃນການກໍ່ສ້າງ ແລະ ສ້ອມແປງ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການກໍ່ສ້າງ ແລະ ສ້ອມແປງ, ການຮັກສາຄວາມສະອາດ, ປອດໄພ, ເປັນລະບຽບ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເປັນຕົ້ນ ການກໍ່ສ້າງ ຫຼື ສ້ອມແປງ ທາງຫຼວງ, ຕຶກອາຄານ, ໂຮງຈັກ ໂຮງງານ, ຮ້ານສ້ອມແປງຍານພາຫະນະ.

ຜູ້ປະກອບການ ຫຼື ເຈົ້າຂອງສະຖານທີ່ກໍ່ສ້າງ ແລະ ສ້ອມແປງ ຕ້ອງອະນາໄມສະຖານທີ່ກໍ່ສ້າງ ແລະ ສ້ອມແປງ ຂອງຕົນ ເປັນຕົ້ນ ທີດນໍ້າ, ມີ ປ້າຍ ຫຼື ສັນຍານ ເຕືອນ, ສິ່ງກັ້ງບັງ, ຮົ້ວອ້ອມ, ຜ້າປົກ, ຕາໜ່າງອ້ອມສະຖານທີ່ ເພື່ອບໍ່ໃຫ້ວັດສະດຸ, ສິ່ງເສດເຫຼືອ, ສິ່ງເປິະເປື້ອນ ແລະ ຂີ້ຝຸ່ນ ຕົກ, ໄຫຼ ຫຼື ປິວ ອອກ ຊຶ່ງສິ່ງຜົນກະທົບທີ່ເປັນອັນຕະລາຍ ຕໍ່ສຸຂະພາບ, ຊີວິດ ຂອງຜູ້ອອກແຮງງານ ແລະ ປະຊາຊົນ ທີ່ຢູ່ໃກ້ຄຽງ ຫຼື ສັນຈອນໄປມາ.

## ໝວດທີ 4
## ການອະນາໄມໃນເຂດໄພພິບັດ

### ມາດຕາ 29 (ໃໝ່) ປັດໄຈສ່ຽງທີ່ສົ່ງຜົນກະທົບຕໍ່ສຸຂະພາບ

ປັດໄຈສ່ຽງທີ່ສົ່ງຜົນກະທົບຕໍ່ສຸຂະພາບ ແມ່ນ ປາກົດການ ຫຼື ເຫດການໃດໜຶ່ງ ທີ່ເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ສົ່ງຜົນກະທົບຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ເປັນຕົ້ນ ການເກີດໄພພິບັດ, ການປ່ຽນແປງດິນຟ້າອາກາດ, ການແຜ່ລະບາດຂອງເຊື້ອພະຍາດ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອເຝົ້າລະວັງ, ຕິດຕາມ, ວາງແຜນ ແລະ ການແກ້ໄຂ ປັດໄຈສ່ຽງດັ່ງກ່າວ ຕາມຄວາມຮັບຜິດຊອບຂອງຕົນ ພ້ອມທັງໃຫ້ຂໍ້ມູນ ຂ່າວສານ, ແນະນຳວິທີການ ກັນ, ຄວບຄຸມ ແລະ ນຳໃຊ້ມາດຕະການໂຕ້ຕອບ ຢ່າງມີປະສິດທິຜົນ ແລະ ທັນການ.

### ມາດຕາ 30 (ໃໝ່) ການອະນາໄມໃນເຂດໄພພິບັດ

ການອະນາໄມໃນເຂດໄພພິບັດ ແມ່ນ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ແກ່ການຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະດວກ ແລະ ປອດໄພ ດ້ວຍການຈັດຫານໍ້າສະອາດ, ຫ້ອງນໍ້າ, ວິດຖ່າຍ ແລະ ເຝົ້າລະວັງຄຸນນະພາບນໍ້າດື່ມ ແລະ ນໍ້າໃຊ້, ສັດ, ແມງໄມ້ ແລະ ສິ່ງທີ່ເປັນພາຫະນຳເຊື້ອພະຍາດ, ອະນາໄມອາຫານ, ສະຖານທີ່ພັກຊົ່ວຄາວ, ຄວບຄຸມມົນລະພິດ, ກຳຈັດ ຂີ້ເຫຍື້ອ, ນໍ້າຂັງ, ບຳບັດນໍ້າເປື້ອນ, ມ້ຽນຊາກສົບ ຂອງຄົນ ຫຼື ສັດ ແລະ ອື່ນໆ.

ຂະແໜງການສາທາລະນະສຸກ ຕ້ອງກະກຽມ, ວາງແຜນ ແລະ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການອະນາໄມເຂດໄພພິບັດ ພ້ອມທັງໃຫ້ຂໍ້ມູນຂ່າວສານ, ໂຄສະນາສຸຂະສຶກສາ ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ທັນການ.

### ມາດຕາ 31 (ໃໝ່) ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ

ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ແມ່ນ ການປັບສະພາບທາງດ້ານຮ່າງກາຍ, ຈິດໃຈ, ວັດຖຸປະກອນ ແລະ ພາຫະນະ, ສ້າງສະພາບທີ່ເອື້ອອຳນວຍ ເພື່ອຮັບມືກັບສະພາບການປ່ຽນແປງດັ່ງກ່າວ ທີ່ອາດຈະເກີດ ຫຼື ເກີດຂຶ້ນ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຕິດຕາມຂໍ້ມູນ ຂ່າວສານ ກ່ຽວກັບສະພາບອາກາດ ແລະ ເຫດການທີ່ເກີດຂຶ້ນ ຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນ ເປັນຕົ້ນ ອາຍເຮືອນແກ້ວ, ການທຳລາຍທາດໂອໂຊນ, ການປ່ຽນແປງລະບົບນິເວດ ຊຶ່ງສົ່ງຜົນກະທົບທີ່ເປັນອັນຕະລາຍຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ລວມທັງໃຫ້ຄຳແນະນຳແກ່ປະຊາຊົນ ກ່ຽວກັບການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ.

**ມາດຕາ 32 (ໃໝ່) ການປະເມີນຜົນກະທົບຕໍ່ສຸຂະພາບ**

ການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ຂະບວນການສຶກສາ, ສຳຫຼວດ, ວິໄຈຂໍ້ມູນ, ນຳໃຊ້ເຄື່ອງມື ເພື່ອວັດແທກ ແລະ ຄາດຄະເນຜົນກະທົບທີ່ອາດເປັນອັນຕະລາຍຕໍ່ສຸຂະພາບ.

ໂຄງການລົງທຶນ ແລະ ກິດຈະການຕ່າງໆ ເປັນຕົ້ນ ໂຄງການພັດທະນາໂຄງລ່າງພື້ນຖານ, ໂຮງຈັກ ໂຮງງານ, ເຂື່ອນໄຟຟ້າ, ການຂຸດຄົ້ນບໍ່ແຮ່, ສະຖານທີ່ວິໄຈເຊື້ອພະຍາດ, ກຳມັນຕະພາບລັງສີ, ກິດຈະການການຜະລິດ ຫຼື ນຳໃຊ້ສານເຄມີ ທີ່ຄາດຄະເນຈະມີຄວາມສ່ຽງຕໍ່ສຸຂະພາບ ຂອງຜູ້ອອກແຮງງານ ແລະ ຊຸມຊົນ ທີ່ຢູ່ໂຄງການ, ເຂດອ້ອມຂ້າງໂຄງການ ຫຼື ສະຖານທີ່ອື່ນ ທີ່ມີຜົນກະທົບທາງກົງ ແລະ/ຫຼື ທາງອ້ອມ ຕ້ອງໄດ້ປະເມີນຜົນກະທົບຕໍ່ສຸຂະພາບ ຕາມລະບຽບການ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ປະເມີນຜົນກະທົບດັ່ງກ່າວຕໍ່ສຸຂະພາບ ກ່ອນການດຳເນີນ, ໄລຍະດຳເນີນ ແລະ ຫຼັງການດຳເນີນໂຄງການ ເພື່ອວາງແຜນໃນການ ກັນ, ຄວບຄຸມ, ໂຕ້ຕອບ ແລະ ຢຸດການສົ່ງຜົນກະທົບນັ້ນຢ່າງທັນການ ແລະ ມີປະສິດທິຜົນ.

## ພາກທີ III
## ການສົ່ງເສີມສຸຂະພາບ

**ມາດຕາ 33 (ປັບປຸງ) ຄວາມສຳຄັນຂອງການສົ່ງເສີມສຸຂະພາບ**

ການສົ່ງເສີມສຸຂະພາບ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ຊຶ່ງບຸກຄົນ, ທຸກຄົນໃນຄອບຄົວ, ຊຸມຊົນ ແລະ ສັງຄົມ ຕ້ອງໄດ້ປະຕິບັດເປັນປະຈຳໂດຍສະເພາະ ການປັບປຸງແບບແຜນດຳລົງຊີວິດທີ່ດີດ້ວຍການຫັນປ່ຽນ ທັດສະນະຄະຕິ, ພຶດຕິກຳ ແລະ ໃຫ້ຖືເອົາການສຸຂະສຶກສາເປັນພື້ນຖານ ເພື່ອໃຫ້ມີສຸຂະພາບດີ, ຈິດໃຈສົດຊື່ນ ແລະ ມີອາຍຸຍືນ.

**ມາດຕາ 34 (ປັບປຸງ) ວຽກງານສົ່ງເສີມສຸຂະພາບ**

ວຽກງານສົ່ງເສີມສຸຂະພາບ ມີ ດັ່ງນີ້:

1. ການສົ່ງເສີມສຸຂະສຶກສາ;
2. ການສົ່ງເສີມສຸຂະພາບຂອງແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ;
3. ການສົ່ງເສີມສຸຂະພາບ ໄວໜຸ່ມ ແລະ ໄວຈະເລີນພັນ;
4. ການສົ່ງເສີມໂພຊະນາການ;
5. ການສົ່ງເສີມສຸຂະພາບຈິດ;
6. ການສົ່ງເສີມສຸຂະພາບປາກ ແລະ ແຂ້ວ;
7. ການສົ່ງເສີມສຸຂະພາບໃນສະຖານການສຶກສາ;
8. ການສົ່ງເສີມສຸຂະພາບຜູ້ອາຍຸສູງ;
9. ການສົ່ງເສີມສຸຂະພາບຄົນພິການ;
10. ການສົ່ງເສີມກາຍຍະບໍລິຫານ ແລະ ສິລະປະ;
11. ການສົ່ງເສີມການກັນພະຍາດບໍ່ຕິດຕໍ່;
12. ການສົ່ງເສີມໃຫ້ຫຼຸດຜ່ອນ ການສູບຢາ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;

13. ການສົ່ງເສີມການຮັກສາສຸຂະພາບຂັ້ນຕົ້ນ;

14. ການສົ່ງເສີມການສ້າງຕົວເມືອງແຫ່ງສຸຂະພາບ.

**ມາດຕາ 35 (ປັບປຸງ) ການສົ່ງເສີມສຸຂະສຶກສາ**

ການສົ່ງເສີມສຸຂະສຶກສາ ແມ່ນ ການໃຫ້ຄວາມຮູ້ ກ່ຽວກັບສຸຂະພາບ ດ້ວຍການໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ໃຫ້ຄຳແນະນຳ, ສື່ສານ, ສະໜອງຂໍ້ມູນ ຂ່າວສານ ແກ່ປະຊາຊົນ ເພື່ອຮັບຮູ້, ເຂົ້າໃຈ, ປ່ຽນແປງພຶດຕິກຳ, ແບບແຜນການດຳລົງຊີວິດ ແລະ ມີສະຕິໃນການຮັກສາສຸຂະພາບຂອງຕົນ.

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ໃນການໃຫ້ສຸຂະສຶກສາ ຢ່າງເປັນປົກກະຕິ ແລະ ທົ່ວເຖິງ.

**ມາດຕາ 36 (ປັບປຸງ) ການສົ່ງເສີມສຸຂະພາບຂອງແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ**

ການສົ່ງເສີມສຸຂະພາບຂອງແມ່ຍິງ, ເດັກອ່ອນ ແລະ ເດັກນ້ອຍ ແມ່ນ ວຽກງານບຸລິມະສິດໜຶ່ງ ຂອງຂະແໜງການສາທາລະນະສຸກ ທັງເປັນຄວາມຮັບຜິດຊອບຂອງການຈັດຕັ້ງທຸກຂັ້ນ, ທຸກຄົນໃນຄອບຄົວ ໂດຍສະເພາະ ພໍ່, ແມ່, ຜູ້ປົກຄອງເດັກ.

ແມ່, ເດັກອ່ອນ ແລະ ເດັກນ້ອຍທຸກຄົນ ຕ້ອງໄດ້ຮັບການບໍລິການດ້ານສຸຂະພາບ ເປັນຕົ້ນ ການອະນາໄມ, ກັນພະຍາດ, ສົ່ງເສີມສຸຂະພາບ, ສຸຂະພາບຈະເລີນພັນ, ປິ່ນປົວ, ຟື້ນຟູສຸຂະພາບ ໃນເວລາຖືພາ, ອອກລູກ, ຫຼຸລູກ ແລະ ຫຼັງອອກລູກ. ສຳລັບເດັກຝາແຝດ, ເດັກບໍ່ຄົບຖ້ວນເດືອນ ແລະ ເດັກເກີດບໍ່ປົກກະຕິ ຕ້ອງໄດ້ຮັບການເບິ່ງແຍງລ້ຽງດູ ຕາມລະບຽບການ.

ແມ່ຍິງໃນໄວຈະເລີນພັນ ແລະ ເດັກອາຍຸ ຕໍ່າກວ່າ ຫ້າ ປີ ຕ້ອງໄດ້ກວດສຸຂະພາບ ແລະ ໄດ້ຮັບ ວັກຊີນກັນພະຍາດ ຄົບຖ້ວນຕາມກົດໝາຍ. ໃນເວລາແມ່ຍິງຖືພາ ຕ້ອງໄດ້ຮັບການກວດ, ຝາກທ້ອງ, ຕິດຕາມ ສຸຂະພາບຂອງເດັກທີ່ຢູ່ໃນທ້ອງ ຖ້າຫາກກວດເຫັນອາການສ່ຽງ ຕ້ອງມີແຜນການແກ້ໄຂລ່ວງໜ້າ, ບໍ່ໃຫ້ເຮັດ ວຽກໜັກກ່ອນ ແລະ ຫຼັງອອກລູກ ຫຼື ຫຼຸລູກ ຕ້ອງໄດ້ຮັບການພັກວຽກ ຕາມກົດໝາຍ, ໃນເວລາອອກລູກ ຕ້ອງ ໄປອອກຢູ່ໂຮງໝໍ, ຖ້າມີຄວາມຈຳເປັນອອກລູກຢູ່ເຮືອນ ຕ້ອງໃຫ້ມີແພດພະດຸງຄັນ, ຜູ້ຊ່ວຍເກີດລູກທີ່ຊຳນານ ງານ ຫຼື ໝໍຕຳແຍ ທີ່ໄດ້ຜ່ານການອົບຮົມ ກຳກັບເບິ່ງນຳ ເພື່ອຮັບປະກັນຄວາມປອດໄພຂອງແມ່ ແລະ ລູກ.

ເດັກອ່ອນ ຕ້ອງໄດ້ຮັບການລ້ຽງດູດ້ວຍນໍ້ານົມແມ່ພຽງຢ່າງດຽວ ແຕ່ວັນເກີດຈົນຮອດອາຍຸ ຫົກເດືອນ, ຫຼັງຈາກນັ້ນ ຈຶ່ງໃຫ້ອາຫານເສີມໄປພ້ອມກັບນໍ້ານົມແມ່ ຈົນຮອດ ເດັກນ້ອຍມີອາຍຸ ສອງປີ ຕາມ ລະບຽບການ.

**ມາດຕາ 37 (ປັບປຸງ) ການສົ່ງເສີມສຸຂະພາບ ໄວໜຸ່ມ ແລະ ໄວຈະເລີນພັນ**

ການສົ່ງເສີມສຸຂະພາບ ໄວໜຸ່ມ ແລະ ໄວຈະເລີນພັນ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ທີ່ຖືກ ຕ້ອງ ເພື່ອໃຫ້ໄວໜຸ່ມ ແລະ ໄວຈະເລີນພັນ ມີຄວາມຮູ້ໃນການປະຕິບັດຕົນ ໃຫ້ມີສຸຂະພາບດີ ທາງຮ່າງກາຍ, ມັນສະໝອງ ແລະ ຈິດໃຈ ເປັນຕົ້ນ ການຫຼິ້ນກິລາ, ກາຍຍະບໍລິຫານ, ໂພຊະນາການ, ການມີເພດສຳພັນທີ່ ປອດໄພ, ການວາງແຜນຄອບຄົວ, ການຖືພາ, ອອກລູກ ແລະ ວິທີການລ້ຽງລູກ.

ຂະແໜງການສາທາລະນະສຸກ ເປັນເຈົ້າການໃນການບໍລິການທາງດ້ານສຸຂະພາບ ແລະ ປະ ສານສົມທົບກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ດ້ວຍການມີສ່ວນຮ່ວມ

ຂອງຄອບຄົວ, ຊຸມຊົນ ແລະ ສັງຄົມ ເພື່ອໃຫ້ໄວໜຸ່ມ ແລະ ໄວຈະເລີນພັນ ມີສຸຂະພາບດີ, ຫຼຸດຜ່ອນການເຈັບ ແລະ ການເສຍຊີວິດ.

### ມາດຕາ 38 (ປັບປຸງ) ການສົ່ງເສີມໂພຊະນາການ

ການສົ່ງເສີມໂພຊະນາການ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ທາງດ້ານໂພຊະນາການ ເພື່ອໃຫ້ທຸກຄົນ ໄດ້ດື່ມ ແລະ ກິນອາຫານ ທີ່ເໝາະສົມທາງດ້ານປະລິມານ ແລະ ຄຸນນະພາບ, ສະອາດ, ປອດໄພ, ມີປະໂຫຍດ, ຫຼາກຫຼາຍ ແລະ ຄົບໝວດ ເປັນຕົ້ນ ທາດແປ້ງ, ທາດໂປຼຕີອິນ (ຊີ້ນ, ປາ, ຖົ່ວເຫຼືອງ ແລະ ອື່ນໆ), ທາດໄຂມັນ, ຜັກ, ໝາກໄມ້, ວິຕາມິນ, ເກືອແຮ່, ນ້ຳຕານ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໃນການສົ່ງເສີມໂພຊະນາການ ແລະ ປະຕິບັດຕາມລະບຽບການ ກ່ຽວກັບການຄວບຄຸມຜະລິດຕະພັນອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ຢ່າງເຂັ້ມງວດ ເພື່ອຮັບປະກັນໃຫ້ມີສຸຂະພາບດີ, ມີພັດທະນາການທີ່ດີທາງດ້ານຮ່າງກາຍ ແລະ ມັນສະໝອງ.

### ມາດຕາ 39 (ໃໝ່) ການສົ່ງເສີມສຸຂະພາບຈິດ

ການສົ່ງເສີມສຸຂະພາບຈິດ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ກ່ຽວກັບຈິດໃຈ ແລະ ການສ້າງສະພາບທີ່ເອື້ອອຳນວຍ, ການຫຼຸດຜ່ອນ ຄວາມກົດດັນ, ຄວາມເຄັ່ງຄຽດ, ຄວາມວິຕົກກັງວົນ ເພື່ອໃຫ້ທຸກຄົນມີການດຳລົງຊີວິດທີ່ດີ ແລະ ສາມາດປະກອບສ່ວນວຽກງານທາງສັງຄົມ ໄດ້ຢ່າງປົກກະຕິ.

ບຸກຄົນ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ຕ້ອງໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ສົ່ງເສີມສຸຂະພາບຈິດດ້ວຍວິທີການ ແລະ ຮູບການທີ່ເໝາະສົມ.

### ມາດຕາ 40 (ໃໝ່) ການສົ່ງເສີມສຸຂະພາບ ປາກ ແລະ ແຂ້ວ

ການສົ່ງເສີມສຸຂະພາບ ປາກ ແລະ ແຂ້ວ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ກ່ຽວກັບການເບິ່ງແຍງ ແລະ ຮັກສາສຸຂະພາບ ປາກ ແລະ ແຂ້ວ ໃຫ້ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອເຮັດໃຫ້ປາກ ແລະ ແຂ້ວ ສະອາດ ແລະ ມີສຸຂະພາບດີ.

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການໂຄສະນາ, ໃຫ້ຄວາມຮູ້, ຂໍ້ມູນ ຂ່າວສານ ແລະ ແນະນຳ ກ່ຽວກັບການເບິ່ງແຍງ ແລະ ຮັກສາສຸຂະພາບ ປາກ ແລະ ແຂ້ວ ຢ່າງເປັນປົກກະຕິ.

ຄອບຄົວ, ສະຖານການສຶກສາ ຕ້ອງໄດ້ປຸກຈິດສຳນຶກ ໃຫ້ສະມາຊິກຄອບຄົວ, ເດັກກ່ອນໄວຮຽນ, ນັກຮຽນ ແລະ ນັກສຶກສາ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ໃນການເບິ່ງແຍງ ແລະ ຮັກສາສຸຂະພາບ ປາກ ແລະ ແຂ້ວ, ຈັດກິດຈະກຳ ກ່ຽວກັບການສົ່ງເສີມສຸຂະພາບ ປາກ ແລະ ແຂ້ວ.

### ມາດຕາ 41 (ໃໝ່) ການສົ່ງເສີມສຸຂະພາບໃນສະຖານການສຶກສາ

ການສົ່ງເສີມສຸຂະພາບໃນສະຖານການສຶກສາ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ກ່ຽວກັບການສົ່ງເສີມ ແລະ ຮັກສາສຸຂະພາບ, ສ້າງສະພາບທີ່ເອື້ອອຳນວຍ ໃນສະຖານການສຶກສາ ເພື່ອໃຫ້ທຸກຄົນຮູ້ຮັກສາສຸຂະພາບ ແລະ ມີແບບແຜນດຳລົງຊີວິດທີ່ດີ.

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບຂະແໜງການສຶກສາທິການ ແລະ ກິລາ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍສະເພາະສະມາຄົມພໍ່ແມ່ນັກຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ, ສະຖານການສຶກສາ ແລະ ຊຸມຊົນ ໃນການໂຄສະນາ ເຜີຍແຜ່ ໃຫ້ຄວາມ

ຮູ້ກ່ຽວກັບການສົ່ງເສີມ ແລະ ຮັກສາສຸຂະພາບ, ສ້າງເງື່ອນໄຂໃຫ້ສະຖານການສຶກສາ ມີການບໍລິການທາງດ້ານສຸຂະພາບ.

ຂະແໜງການ ສາທາລະນະສຸກ, ສຶກສາທິການ ແລະ ກິລາ ຕ້ອງເອົາວຽກງານສົ່ງເສີມສຸຂະພາບ ເຂົ້າໃນຫຼັກສູດການຮຽນ-ການສອນ.

**ມາດຕາ 42 (ປັບປຸງ) ການສົ່ງເສີມສຸຂະພາບຜູ້ອາຍຸສູງ**

ການສົ່ງເສີມສຸຂະພາບຜູ້ອາຍຸສູງ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ຄໍາແນະນໍາ ກ່ຽວກັບການສົ່ງເສີມ ແລະ ຮັກສາສຸຂະພາບ, ສ້າງສະພາບທີ່ເອື້ອອໍານວຍ ໃນການດໍາລົງຊີວິດສໍາລັບຜູ້ອາຍຸສູງ ເພື່ອໃຫ້ມີສຸຂະພາບດີ.

ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໃນການເບິ່ງແຍງດູແລສຸຂະພາບ ດ້ວຍການໃຫ້ພັກຜ່ອນ, ອອກກໍາລັງກາຍ, ໄດ້ຮັບການກວດສຸຂະພາບ, ປິ່ນປົວ ແລະ ສາມາດຮ່ວມກິດຈະກໍາໃນສັງຄົມ ຢ່າງເປັນປົກກະຕິ.

ສໍາລັບຜູ້ອາຍຸສູງທີ່ ດ້ອຍໂອກາດ ແລະ ບໍ່ມີຜູ້ເບິ່ງແຍງ ຕ້ອງໄດ້ຮັບການເບິ່ງແຍງດູແລ ຕາມລະບຽບການ.

**ມາດຕາ 43 (ປັບປຸງ) ການສົ່ງເສີມສຸຂະພາບຄົນພິການ**

ການສົ່ງເສີມສຸຂະພາບຄົນພິການ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ຄໍາແນະນໍາ ກ່ຽວກັບການສົ່ງເສີມ ແລະ ຮັກສາສຸຂະພາບ, ສ້າງສະພາບທີ່ເອື້ອອໍານວຍ ແກ່ຄົນພິການແຕ່ລະປະເພດ ໃຫ້ໄດ້ຮັບການສົ່ງເສີມສຸຂະພາບ ແລະ ການບໍລິການທາງດ້ານສຸຂະພາບ ຢ່າງເໝາະສົມ.

ບຸກຄົນ, ຄອບຄົວ, ຊຸມຊົນ ແລະ ສັງຄົມ ຕ້ອງເອົາໃຈໃສ່ໃນການສົ່ງເສີມສຸຂະພາບຄົນພິການ ດ້ວຍການເບິ່ງແຍງດູແລ, ໃຫ້ກໍາລັງໃຈ ແລະ ໄດ້ຮັບການບໍລິການສຸຂະພາບ ເພື່ອໃຫ້ສາມາດດໍາລົງຊີວິດ ແລະ ເຂົ້າຮ່ວມກິດຈະກໍາທາງສັງຄົມ ຢ່າງປົກກະຕິ.

**ມາດຕາ 44 (ປັບປຸງ) ການສົ່ງເສີມກາຍຍະບໍລິຫານ ແລະ ສິລະປະ**

ການສົ່ງເສີມກາຍຍະບໍລິຫານ ແລະ ສິລະປະ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ການສ້າງສະພາບທີ່ເອື້ອອໍານວຍ ໃຫ້ທຸກຄົນໄດ້ ອອກກໍາລັງກາຍ, ຫຼິ້ນກິລາ ແລະ ສິລະປະ ເພື່ອໃຫ້ມີສຸຂະພາບດີ, ມີຈິດໃຈເບີກບານມ່ວນຊື່ນ, ຮ່າງກາຍແຂງແຮງ, ສະໝອງໄດ້ຮັບການພັດທະນາ ແລະ ມີອາຍຸຍືນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງສ້າງເງື່ອນໄຂໃຫ້ທຸກຄົນ ໃນຊຸມຊົນ ແລະ ສັງຄົມ ໄດ້ເຄື່ອນໄຫວກາຍຍະບໍລິຫານ ແລະ ສິລະປະ, ວັນນະຄະດີ ດ້ວຍຫຼາຍປະເພດ, ຫຼາຍຮູບການ ແລະ ຫຼາຍລະດັບ.

**ມາດຕາ 45 (ໃໝ່) ການສົ່ງເສີມການກັນພະຍາດບໍ່ຕິດຕໍ່**

ການສົ່ງເສີມການກັນພະຍາດບໍ່ຕິດຕໍ່ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ການສ້າງສະພາບທີ່ເອື້ອອໍານວຍ ໃຫ້ປະຊາຊົນມີການປະພຶດ ຫຼື ການດໍາລົງຊີວິດ ທີ່ມີສຸຂານາໄມທີ່ດີ ເປັນຕົ້ນ ບໍລິໂພກອາຫານທີ່ມີຄຸນຄ່າທາງດ້ານໂພຊະນາການ, ອອກກໍາລັງກາຍ, ບໍ່ສູບຢາ, ບໍ່ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ຫຼີກເວັ້ນບັນດາປັດໄຈສ່ຽງຕໍ່ການເກີດພະຍາດດັ່ງກ່າວ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງສ້າງເງື່ອນໄຂ, ສິ່ງອຳນວຍຄວາມສະດວກ ແລະ ປະຕິບັດການສົ່ງເສີມການກັນພະຍາດບໍ່ຕິດຕໍ່ ຢ່າງເປັນເຈົ້າການ ແລະ ຕັ້ງໜ້າ.

**ມາດຕາ 46 (ໃໝ່) ການສົ່ງເສີມໃຫ້ຫຼຸດຜ່ອນ ການສູບຢາ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ**

ການສົ່ງເສີມໃຫ້ຫຼຸດຜ່ອນ ການສູບຢາ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ປະຊາຊົນ ຫຼຸດຜ່ອນ ຫຼື ຢຸດເຊົາ ການສູບຢາ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອໃຫ້ມີການດຳລົງຊີວິດທີ່ມີສຸຂະນາໄມທີ່ດີ, ມີສຸຂະພາບດີ, ມີຄວາມເບີກບານມ່ວນຊື່ນ ແລະ ມີອາຍຸຍືນ.

**ມາດຕາ 47 (ໃໝ່) ການສົ່ງເສີມການຮັກສາສຸຂະພາບຂັ້ນຕົ້ນ**

ການສົ່ງເສີມການຮັກສາສຸຂະພາບຂັ້ນຕົ້ນ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ການສ້າງສະພາບທີ່ເອື້ອອຳນວຍ ໃຫ້ປະຊາຊົນເປັນເຈົ້າການ ໃນການຮັກສາສຸຂະພາບຂອງຕົນ, ທຸກຄົນໃນຄອບຄົວ, ຊຸມຊົນ ແລະ ສັງຄົມ ໂດຍປະຕິບັດຫຼັກການສຸຂະນາໄມ ແລະ ສົ່ງເສີມສຸຂະພາບ, ພັດທະນາອາສາສະໝັກສາທາລະນະສຸກບ້ານ, ບໍລິການສຸຂະພາບແບບເຊື່ອມສານໃນຊຸມຊົນ ແລະ ສ້າງບ້ານສາທາລະນະສຸກແບບຢ່າງ ເພື່ອເຮັດໃຫ້ລະບົບສາທາລະນະສຸກຂັ້ນຮາກຖານມີຄວາມເຂັ້ມແຂງ ແລະ ບັນລຸການປົກຄຸມສຸຂະພາບທົ່ວປວງຊົນ ຕາມແຜນພັດທະນາວຽກງານສາທາລະນະສຸກ ໃນແຕ່ລະໄລຍະ.

ຂະແໜງການສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສົ່ງເສີມການຮັກສາສຸຂະພາບຂັ້ນຕົ້ນ.

ສຳລັບ ການພັດທະນາອາສາສະໝັກສາທາລະນະສຸກບ້ານ, ການບໍລິການສຸຂະພາບແບບເຊື່ອມສານໃນຊຸມຊົນ ແລະ ສ້າງບ້ານສາທາລະນະສຸກແບບຢ່າງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 48 (ໃໝ່) ການສົ່ງເສີມການສ້າງຕົວເມືອງແຫ່ງສຸຂະພາບ**

ການສົ່ງເສີມການສ້າງຕົວເມືອງແຫ່ງສຸຂະພາບ ແມ່ນ ການໃຫ້ຂໍ້ມູນ ຂ່າວສານ ແລະ ການສ້າງສະພາບທີ່ເອື້ອອຳນວຍ ເຮັດໃຫ້ຕົວເມືອງ ມີຄວາມສະອາດ, ຈົບງາມ, ປອດໄພ, ເປັນລະບຽບຮຽບຮ້ອຍ, ໜ້າຢູ່, ມີສະຖານທີ່ອອກກຳລັງກາຍ, ມີອາກາດສົດຊື່ນ, ມີສວນສາທາລະນະ, ມີບ່ອນພັກຜ່ອນ ແລະ ເປັນຕົວເມືອງສີຂຽວຍືນຍົງ ຊຶ່ງເຮັດໃຫ້ທຸກຄົນໃນຕົວເມືອງມີສຸຂະພາບດີ ແລະ ຫຼຸດຜ່ອນຄວາມສ່ຽງການເກີດພະຍາດ.

ກະຊວງສາທາລະນະສຸກ ປະສານສົມທົບກັບກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ກຳນົດເງື່ອນໄຂ, ມາດຕະຖານ, ຂັ້ນຕອນ ແລະ ການຮັບຮອງເປັນຕົວເມືອງແຫ່ງສຸຂະພາບ.

# ພາກທີ IV

# ການປະກອບອາຊີບ ແລະ ທຸລະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ

## ໝວດທີ 1

## ການປະກອບອາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ

**ມາດຕາ 49 (ໃໝ່) ການປະກອບອາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ**

ຜູ້ປະກອບອາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ບຸກຄົນທີ່ປະຕິບັດໜ້າທີ່ ຫຼື ເຮັດວຽກກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ.

ຜູ້ປະກອບອາຊີບການອະນາໄມ ຫຼື ສິ່ງເສີມສຸຂະພາບ ມີ ເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ຫຼື ຜູ້ດຳລົງຊີວິດທີ່ຖືກຕ້ອງ ຢູ່ ສປປ ລາວ;
2. ມີຄຸນສົມບັດ, ຈັນຍາບັນ, ຈັນຍາທຳ, ມີຄວາມຮູ້, ມີບົດຮຽນ, ມີປະສົບການ, ໄດ້ຜ່ານການຝຶກອົບຮົມ ດ້ານການອະນາໄມ ຫຼື ສິ່ງເສີມສຸຂະພາບ;
3. ບໍ່ເຄີຍຖືກລົງວິໄນ ດ້ານວິຊາຊີບການອະນາໄມ ຫຼື ສິ່ງເສີມສຸຂະພາບ ຫຼື ບໍ່ເຄີຍຖືກລົງໂທດທາງອາຍາ ຍ້ອນການກະທຳຜິດໂດຍເຈດຕະນາ;
4. ມີສຸຂະພາບດີ.

**ມາດຕາ 50 (ໃໝ່) ສະພາວິຊາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ**

ສະພາວິຊາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ອົງການທີ່ເປັນຕົວແທນໃຫ້ແກ່ຜູ້ປະກອບວິຊາຊີບການອະນາໄມ ແລະ ສິ່ງເສີມສຸຂະພາບ ຊຶ່ງມີພາລະບົດບາດ, ຄຸ້ມຄອງ, ກວດກາ, ການເຄື່ອນໄຫວວິຊາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ ໂດຍກະຊວງສາທາລະນະສຸກເປັນຜູ້ສ້າງຕັ້ງ.

ສະພາວິຊາຊີບ ການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ການຈັດຕັ້ງດຽວກັນກັບສະພາຄຸ້ມຄອງວິຊາຊີບປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປິ່ນປົວ.

## ໝວດທີ 2

## ທຸລະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ

**ມາດຕາ 51 (ໃໝ່) ປະເພດທຸລະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ**

ປະເພດທຸລະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ມີ ດັ່ງນີ້:

1. ການວິໄຈ;
2. ການບໍລິການ;
3. ການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນ;
4. ການສ້າງສາລະຄະດີ ແລະ ສື່ສິ່ງພິມ ເພື່ອໂຄສະນາ ແລະ ຈຳໜ່າຍ.

**ມາດຕາ 52 (ໃໝ່) ການວິໄຈກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ**

ການວິໄຈກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ການໃຫ້ບໍລິການຄົ້ນຄວ້າ, ປະເມີນດ້ານການອະນາໄມ ແລະ ສິ່ງເສີມສຸຂະພາບ ເພື່ອໃຫ້ໄດ້ຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ມາດຕະຖານ ເປັນຕົ້ນ ການວິໄຈ ຄຸນນະພາບນ້ຳ, ອາຫານ, ເຄື່ອງດື່ມ, ທາດເບື່ອ, ສານອັນຕະລາຍ.

ຜົນຂອງການວິໄຈ ດ້ານການອະນາໄມ ແລະ ສິ່ງເສີມສຸຂະພາບ ຕ້ອງລາຍງານໃຫ້ຂະແໜງການສາທາລະນະສຸກ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 53 (ໃໝ່) ການບໍລິການກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ**

ການບໍລິການກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ການເຄື່ອນໄຫວດຳເນີນທຸລະກິດ ທີ່ເປັນການໃຫ້ການບໍລິການກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ໃຫ້ແກ່ຜູ້ອື່ນ ໂດຍໄດ້ຮັບຄ່າຕອບແທນ ເປັນຕົ້ນ ການໃຫ້ບໍລິການກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ໃນໂຮງແຮມ, ຮ້ານອາຫານ, ຕະຫຼາດ, ສະລອຍນ້ຳ, ການກຳຈັດສິ່ງເສດເຫຼືອ, ການຊາປະນະກິດສົບ, ສູນອອກກຳລັງກາຍ.

**ມາດຕາ 54 (ໃໝ່) ການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ**

ການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຜະລິດຕະພັນ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ການດຳເນີນທຸລະກິດໃນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ເປັນຕົ້ນ ນ້ຳຢາທຳຄວາມສະອາດ, ອຸປະກອນສຳລັບການອອກກຳລັງກາຍ, ອາຫານເສີມ, ເຄື່ອງຫຼິ້ນເດັກນ້ອຍ, ອຸປະກອນການແພດ.

ຂະແໜງການສາທາລະນະສຸກ ປະສານສົມທົບກັບຂະແໜງການອື່ນທີ່ ກ່ຽວຂ້ອງກຳນົດມາດຕະການ, ລະບຽບການ, ຄຸ້ມຄອງການນຳເຂົ້າ, ສົ່ງອອກ ແລະ ການຈຳໜ່າຍຜະລິດຕະພັນ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ຕາມພາລະບົດບາດຂອງຕົນ.

**ມາດຕາ 55 (ໃໝ່) ການສ້າງສາລະຄະດີ ແລະ ສື່ສິ່ງພິມ ເພື່ອໂຄສະນາ ແລະ ຈຳໜ່າຍ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ**

ການສ້າງສາລະຄະດີ ແລະ ສື່ສິ່ງພິມ ເພື່ອໂຄສະນາ ແລະ ຈຳໜ່າຍ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ແມ່ນ ການຂຽນ, ການບັນທຶກສຽງ ແລະ ຮູບພາບ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ໂດຍຜ່ານວິທີການຂອງຜູ້ສ້າງ ເພື່ອໃຫ້ສາລະຄວາມຮູ້ ແກ່ຜູ້ອ່ານ, ຜູ້ຟັງ ແລະ ຜູ້ຊົມ ໂດຍຜ່ານສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ.

ມາດຕາ 56 (ໃໝ່) ເງື່ອນໄຂໃນການດຳເນີນທຸລະກິດ

ການດຳເນີນທຸລະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ມີເງື່ອນໄຂທົ່ວໄປ ດັ່ງນີ້:

1. ມີບົດວິພາກເສດຖະກິດ-ເຕັກນິກ, ແຜນດຳເນີນທຸລະກິດ, ມີສະຖານທີ່, ສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸປະກອນ, ພາຫະນະຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກທີ່ຈຳເປັນ, ບຸກຄະລະກອນທີ່ພຽງພໍ ແລະ ເໝາະສົມ;

2. ມີທຶນພຽງພໍ ໂດຍມີການຢັ້ງຢືນຖານະທາງດ້ານການເງິນຈາກທະນາຄານ ຫຼື ສະຖາບັນການເງິນອື່ນ;

3. ມີມາດຕະການໃນການປົກປັກຮັກສາ ຄວາມປອດໄພ ແລະ ສິ່ງແວດລ້ອມ;

4. ບໍ່ເຄີຍຖືກສານຕັດສິນລົງໂທດ ຍ້ອນການກະທຳຜິດໂດຍເຈດຕະນາ.

ນອກຈາກມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນວັກທີ ໜຶ່ງ ຂອງມາດຕານີ້ ການດຳເນີນທຸລະກິດ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ຍັງຕ້ອງມີເງື່ອນໄຂສະເພາະ ຕາມແຕ່ລະກໍລະນີຂອງປະເພດທຸລະກິດ ທີ່ກະຊວງສາທາລະນະສຸກ ວາງອອກ.

**ມາດຕາ 57 (ໃໝ່) ການດຳເນີນທຸລະກິດກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ທີ່ຢູ່ໃນບັນຊີຄວບຄຸມ ຕ້ອງຍື່ນຄຳຮ້ອງພ້ອມເອກະສານຄົບຊຸດຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ທີ່ບໍ່ຢູ່ໃນບັນຊີຄວບຄຸມ ຕ້ອງຂໍອະນຸຍາດຂຶ້ນທະບຽນວິສາຫະກິດນຳຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການສາທາລະນະສຸກ.

**ມາດຕາ 58 (ໃໝ່) ການພິຈາລະນາອະນຸຍາດດຳເນີນທຸລະກິດກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ**

ຂະແໜງການສາທາລະນະສຸກ ຕ້ອງພິຈາລະນາທາງດ້ານວິຊາການ ຫຼື ອະນຸຍາດດຳເນີນທຸລະກິດ ຕາມເວລາທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 59 (ໃໝ່) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ຈະຖືກໂຈະໃນກໍລະນີດັ່ງນີ້:

1. ການສະເໜີຂອງຜູ້ປະກອບການ;

2. ຜູ້ປະກອບການບໍ່ປະຕິບັດຕາມເປົ້າໝາຍທີ່ອະນຸຍາດ, ຕາມສັນຍາ ຫຼື ລະເມີດກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ປະກອບການ ຫາກບໍ່ປັບປຸງ ແລະ ແກ້ໄຂໃຫ້ຖືກຕ້ອງ ຕາມການແຈ້ງເຕືອນ ສອງຄັ້ງ, ຄັ້ງລະ ສາມສິບວັນ. ຂະແໜງການສາທາລະນະສຸກ ສັ່ງໂຈະການດຳເນີນທຸລະກິດ ແລ້ວແຈ້ງໃຫ້ອົງການທີ່ອະນຸຍາດ ແລະ ອອກທະບຽນວິສາຫະກິດ ຊາບ.

ມາດຕາ 60 (ໃໝ່) ການຖອນໃບທະບຽນວິສາຫະກິດ

ໃບທະບຽນວິສະຫະກິດທຸລະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ຈະຖືກຖອນ ໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມການແຈ້ງໂຈະ ທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

ອົງການທີ່ອະນຸຍາດ ແລະ ອອກໃບທະບຽນວິສາຫະກິດ ພິຈາລະນາຖອນໃບທະບຽນວິສາຫະກິດ ຕາມການສະເໜີຂອງຂະແໜງການສາທາລະນະສຸກ.

ມາດຕາ 61 (ໃໝ່) ການສະເໜີຕໍ່ການແຈ້ງໂຈະການດຳເນີນທຸລະກິດ ຫຼື ຖອນໃບທະບຽນວິສະຫະກິດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກໂຈະການດຳເນີນທຸລະກິດ ຫຼື ຖອນໃບທະບຽນວິສາຫະກິດ ກ່ຽວກັບການອະນາໄມ ແລະ ສິ່ງເສີມສຸຂະພາບ ສາມາດສະເໜີຕໍ່ອົງການຂັ້ນເທິງຂອງອົງການທີ່ແຈ້ງ ໂຈະ ຫຼື ຖອນ ນັ້ນ ເພື່ອພິຈາລະນາຄືນ ກ່ຽວກັບການໂຈະ ຫຼື ການຖອນດັ່ງກ່າວ ຖ້າຫາກພິສູດໄດ້ວ່າຕົນໄດ້ປະຕິບັດຖືກຕ້ອງຕາມກົດໝາຍແລ້ວ ພ້ອມທັງມີຂໍ້ມູນ ຫຼັກຖານທີ່ຢັ້ງຢືນໄດ້ວ່າ ການໂຈະ ຫຼື ຖອນ ນັ້ນ ບໍ່ຖືກຕ້ອງຕາມກົດໝາຍ.

## ພາກທີ V
## ຂໍ້ຫ້າມ

ມາດຕາ 62 (ປັບປຸງ) ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ຕໍ່ການເຄື່ອນໄຫວວຽກງານ ຫຼື ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ;

2. ໃຫ້ ຫຼື ຮັບ, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ ແກ່ເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ;

3. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ໃນທາງບິດເບືອນ, ເຊື່ອມເສຍ ກ່ຽວກັບວຽກງານອະນາໄມ ແລະ ສິ່ງເສີມສຸຂະພາບ;

4. ຈູດຂີ້ເຫຍື້ອ, ຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອ, ຊາກສັດ, ສິ່ງເປິະເປື້ອນ, ສານເຄມີ ຫຼື ປ່ອຍນ້ຳເສຍໃສ່ ແຫຼ່ງນ້ຳ, ທີ່ດິນຂອງຜູ້ອື່ນ ຫຼື ບ່ອນອື່ນໆ ຫຼື ບໍ່ຜ່ານຂະບວນການບຳບັດ;

5. ໃຫ້ຜູ້ເປັນພະຍາດຕິດຕໍ່ ປະກອບວິຊາຊີບການອະນາໄມ ແລະ ສິ່ງເສີມສຸຂະພາບ;

6. ຮັກສາຊາກສົບ ໂດຍບໍ່ຖືກຕ້ອງຕາມຫຼັກການສຸຂານາໄມ, ຈູດເຜົາ ຫຼື ຝັງຊາກສົບ ທີ່ສົ່ງຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 63 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕາມກົດໝາຍ;

2. ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ ກົດໜ່ວງ, ຖ່ວງດຶງ, ຂໍເອົາ ຫຼື ຮັບເອົາ ສິນບົນ ເພື່ອຜົນປະໂຫຍດແກ່ຕົນ ຫຼື ບຸກຄົນອື່ນ ຊຶ່ງສ້າງຄວາມເສຍຫາຍ ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;

3. ອອກເອກະສານ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ທີ່ບໍ່ຖືກຕ້ອງ ຫຼື ປອມແປງເອກະສານດັ່ງກ່າວ;

4. ຮຽກ ຫຼື ທວງເອົາຄ່າທຳນຽມ, ຄ່າບໍລິການ ຫຼື ນຳໃຊ້ລາຍຮັບວິຊາການທີ່ບໍ່ຖືກຕ້ອງຕາມກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 64 (ໃໝ່) ຂໍ້ຫ້າມສຳລັບ ຜູ້ດຳເນີນທຸລະກິດກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ**

ຫ້າມຜູ້ດຳເນີນທຸລະກິດກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດຳເນີນທຸລະກິດ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ຫຼັກການສຸຂານາໄມ;
3. ດຳເນີນທຸລະກິດ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
4. ໃຫ້ ສິນບົນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນ ເກີນຄວາມເປັນຈິງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ

### ໝວດທີ 1
### ການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ

**ມາດຕາ 65 (ປັບປຸງ) ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ;
4. ໂຮງໝໍນ້ອຍ;
5. ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ.

ໃນກໍລະນີຈໍາເປັນ ອາດສ້າງຕັ້ງຄະນະກໍາມະການ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຂຶ້ນກໍໄດ້.

**ມາດຕາ 66 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ເປັນ ແຜນການ, ແຜນງານ ແລະ ໂຄງການ ລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

4. ຄົ້ນຄວ້າ ອອກນິຕິກໍາໃຕ້ກົດໝາຍ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

5. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດທາງດ້ານວິຊາການ ຫຼື ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

6. ສ້າງ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ ບຸກຄະລາກອນ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ;

7. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຂັ້ນລຸ່ມຂອງຕົນທີ່ຂັດກັບກົດໝາຍ;

8. ຮັບພິຈາລະນາ ແກ້ໄຂຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

9. ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃນຂອບເຂດທົ່ວປະເທດ;

10. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

11. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 67 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

3. ຄຸ້ມຄອງ, ນຳໃຊ້, ສະເໜີສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ;

4. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດທາງດ້ານວິຊາການ ຫຼື ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

5. ເກັບກຳ ແລະ ບັນທຶກ ຂໍ້ມູນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

6. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ທີ່ຂັດກັບກົດໝາຍ;

7. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

8. ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຢູ່ພາຍໃນແຂວງ, ນະຄອນຫຼວງ;

9. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

10. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ກະຊວງສາທາລະນະສຸກ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

2. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

3. ສະເໜີ ໂຈະ ຫຼື ຖອນ ໃບອະນຸຍາດທາງດ້ານວິຊາການ ຫຼື ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຕໍ່ຂັ້ນເທິງ;

4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ, ນຳໃຊ້ ບຸກຄະລາກອນ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ;

5. ເກັບກຳ ແລະ ບັນທຶກຂໍ້ມູນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

6. ຮັບພິຈາລະນາ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

7. ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຢູ່ພາຍໃນ ເມືອງ, ເທດສະບານ, ນະຄອນ;

8. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 (ໃໝ່) ສິດ ແລະ ໜ້າທີ່ ຂອງໂຮງໝໍນ້ອຍ**

ໃນການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໂຮງໝໍນ້ອຍ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

2. ເຜີຍແຜ່ ແລະ ປຸກລະດົມປະຊາຊົນລາວບັນດາເຜົ່າ ໃນການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

3. ເຂົ້າຮ່ວມຝຶກອົບຮົມ, ຍົກລະດັບ ທາງດ້ານວິຊາການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

4. ເກັບກຳ ແລະ ບັນທຶກຂໍ້ມູນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ເຂົ້າຮ່ວມ ໃນການໄກ່ເກ່ຍຂໍ້ຂັດແຍ່ງ ທີ່ກ່ຽວຂ້ອງກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

6. ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຢູ່ຂັ້ນບ້ານ;

7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ອົງການປົກຄອງບ້ານ ແລະ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ**

ໃນການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ກິດຈະກຳ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

2. ເຜີຍແຜ່ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ

3. ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານຮັກສາສຸຂະພາບຂັ້ນຕົ້ນ ພາຍໃນບ້ານ;

4. ເຂົ້າຮ່ວມຝຶກອົບຮົມ, ຍົກລະດັບທາງດ້ານວິຊາການ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

5. ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອ ໃນເວລາແພດລົງເຄື່ອນທີ່ປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

6. ປຸກລະດົມ, ຂົນຂວາຍ ໃຫ້ປະຊາຊົນຕື່ນຕົວສະໝັກໃຈ ເຂົ້າຮ່ວມເປັນອາສາສະໝັກສາທາລະນະສຸກບ້ານ ແລະ ເຂົ້າຮ່ວມໃນວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

7. ເຂົ້າຮ່ວມໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໃຫ້ອົງການປົກຄອງບ້ານ ແລະ ໂຮງໝໍນ້ອຍ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການສາທາລະນະສຸກ ໃນການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ

**ມາດຕາ 72 (ໃໝ່) ອົງການກວດກາ**

ອົງການກວດກາວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 73 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ກ່ຽວກັບວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ;
4. ການສ້າງ ແລະ ປະຕິບັດແຜນການ, ແຜນງານ, ໂຄງການ ກ່ຽວກັບການອະນາໄມ ແລະ ສົ່ງເສີມສຸຂະພາບ.

**ມາດຕາ 74 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາ ແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານດັ່ງກ່າວ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VII
## ງົບປະມານ, ເຄື່ອງໝາຍ, ຕາປະທັບ ແລະ ເຄື່ອງແບບ

**ມາດຕາ 75 (ໃໝ່) ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
3. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 76 (ໃໝ່) ເຄື່ອງໝາຍ, ຕາປະທັບ ແລະ ເຄື່ອງແບບ

ອົງການຄຸ້ມຄອງວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ມີ ເຄື່ອງໝາຍ ແລະ ຕາປະທັບ ແລະ ພະນັກງານ-ລັດຖະກອນ ທີ່ເຮັດວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ມີ ເຄື່ອງແບບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍກະຊວງສາທາລະນະສຸກ ເປັນຜູ້ກຳນົດ.

## ພາກທີ VIII

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 77 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະກອບສ່ວນເຂົ້າໃນວຽກງານອະນາໄມ ແລະ ສົ່ງເສີມສຸຂະພາບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 78 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ IX

## ບົດບັນຍັດສຸດທ້າຍ

ມາດຕາ 79 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

ມາດຕາ 80 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 08/ສພຊ, ລົງວັນທີ 21 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ



ປານີ ຢາທໍ່ຕູ້